**ໂຮງຮຽນ LOWELL PUBLIC SCHOOLS**
Henry J. Mroz Central Administration Offices
(ສຳນັກງານບໍລິຫານສ່ວນກາງ)
155 Merrimack Street
Lowell, MA 01852

ວັນທີ 2 ພະຈິກ 2020

ເຖິງບັນດານັກຮຽນ, ເຈົ້າໜ້າທີ່, ຜູ້ປົກຄອງ ແລະ ສະມາຊິກຊຸມຊົນຂອງໂຮງຮຽນ Lowell Public Schools,

ໃນປີກາຍ, ເຂດການສຶກສາຂອງພວກເຮົາໄດ້ດຳເນີນງານອັນສຳຄັນກ່ຽວກັບຂະບວນການວາງແຜນທາງຍຸດທະສາດ ໂດຍກຳນົດພັນທະສັນຍາພື້ນຖານຂອງພວກເຮົາໃນການສ້າງຄວາມສະເໝີພາບ ເຊິ່ງຖືເປັນຈຸດໃຈກາງຂອງວຽກງານພວກເຮົາໃນທຸກໆດ້ານ. ແນວໃດກໍຕາມ, ພວກເຮົາທຸກຄົນຮູ້ດີວ່າຄຳເວົ້າທີ່ປາດສະຈາກການກະທຳນັ້ນບໍ່ມີຄວາມໝາຍຄວາມສຳຄັນຫຍັງເລີຍ. ນອກນັ້ນ, ພວກເຮົາກໍຍັງຮູ້ດີວ່າໃນຖານະຜູ້ນຳຂອງໂຮງຮຽນພາກລັດ, ພວກເຮົາຈະຕ້ອງໄດ້ຮັບຜິດຊອບໃນການດຳເນີນການກວດສອບບໍ່ພຽງແຕ່ກໍລະນີ ແລະ ຜົນກະທົບອັນເນື່ອງມາຈາກການແບ່ງແຍກທາງເຊື້ອຊາດທີ່ເກີດຂຶ້ນຕໍ່ບຸກຄົນເທົ່ານັ້ນ, ແຕ່ຍັງລວມໄປເຖິງການແບ່ງແຍກທີ່ເກີດຂຶ້ນຕໍ່ກັບສະຖາບັນ ເຊິ່ງຍັງຄົງພົບເຫັນການແບ່ງແຍກທາງເຊື້ອຊາດ ແລະ ສິດທິພິເສດມີຢູ່ໂດຍກົງ ຫຼື ທາງອ້ອມໃນນະໂຍບາຍ ແລະ ການປະຕິບັດງານຂອງເຂດການສຶກສາຢ່າງກວ້າງຂວາງ.

ເພື່ອໃຫ້ເປັນໄປຕາມຄຳໝັ້ນສັນຍາຂອງພວກເຮົາໃນການສະແດງຄວາມຮັບຜິດຊອບຕໍ່ການຈັດການກັບການບໍ່ດຳເນີນການ ເຊິ່ງໄດ້ກໍ່ໃຫ້ເກີດການເລືອກປະຕິບັດໃນອະດີດຕໍ່ບັນດາຊຸມຊົນການຮຽນຮູ້ທີ່ມີຄວາມຫຼາກຫຼາຍຂອງພວກເຮົາ, ພວກເຮົາໄດ້ອອກແບບລະບຽບການຊຸດໃໝ່ກ່ຽວກັບການລາຍງານການປະພຶດຕົນອັນບໍ່ເປັນກາງ (ເຊັ່ນ: ການເລືອກປະຕິບັດ, ການລ່ວງລະເມີດ ແລະ ການແບ່ງແຍກທາງເຊື້ອຊາດ). ນີ້ເປັນພຽງວິທີການໜຶ່ງໃນການຕໍ່ສູ້ກັບການປະຕິບັດທີ່ບໍ່ມີຄວາມສະເໝີພາບກັນໃນເຂດການສຶກສາຂອງພວກເຮົາ.

ໃນສອງສາມອາທິດໜ້າ, ພວກເຮົາຈະດຳເນີນງານເພື່ອປູກຝັງຈິດສຳນຶກກ່ຽວກັບລະບຽບການລາຍງານຊຸດໃໝ່ໃຫ້ແກ່ບັນດາເຈົ້າໜ້າທີ່, ນັກຮຽນ ແລະ ຜູ້ປົກຄອງຂອງພວກເຂົາ ເຊິ່ງຈະໄດ້ມີການລວມເອົາຊຸດການຝຶກອົບຮົມ ***Anti-Racism (ການຕໍ່ຕ້ານການແບ່ງແຍກທາງເຊື້ອຊາດ)*** ໃຫ້ແກ່ເຈົ້າໜ້າທີ່ ແລະ ຜູ້ບໍລິຫານໄດ້ເຂົ້າຮ່ວມ. ບັນດາຊຸດການຝຶກອົບຮົມຕໍ່ຕ້ານການແບ່ງແຍກທາງເຊື້ອຊາດເຫຼົ່ານີ້ຈະໄດ້ດຳເນີນຂຶ້ນໃນເດືອນພະຈິກໃຫ້ແກ່ເຈົ້າໜ້າທີ່ທຸກຄົນທົ່ວທັງເຂດການສຶກສາ. ບັນດາຜູ້ນຳຂອງໂຮງຮຽນ ແລະ ຜູ້ບໍລິຫານຂອງສຳນັກງານສ່ວນກາງຈະດຳເນີນການຝຶກອົບຮົມທຸກເດືອນຕະຫຼອດທັງສົກຮຽນ 2020-21 ໃນລະຫວ່າງທີ່ທີມງານເຂດການສຶກສາຈັດທຳແຜນຕໍ່ຕ້ານການແບ່ງແຍກທາງເຊື້ອຊາດໃນຮູບແບບຫຼາຍປີ ເພື່ອໃຫ້ຈັດຕັ້ງປະຕິບັດໃນທົ່ວເຂດການສຶກສາໃນຕົ້ນປີໜ້າ.

ພວກເຮົາຮັບຮູ້ດີວ່າຍັງມີວຽກງານອີກຫຼາຍຢ່າງທີ່ຈະຕ້ອງໄດ້ດຳເນີນໃຫ້ສຳເລັດ ເພື່ອຮັບປະກັນວ່ານັກຮຽນທຸກຄົນໃນເມືອງ Lowell, ບໍ່ວ່າຈະມີເຊື້ອຊາດ, ຊົນເຜົ່າ ຫຼື ສະຖານະທາງເສດຖະກິດແລະສັງຄົມຮູບແບບໃດກໍຕາມ, ໃຫ້ສາມາດເຂົ້າເຖິງການສຶກສາທີ່ມີຄຸນນະພາບໄດ້ຢ່າງສະເໝີພາບ ເຊິ່ງຈະຊ່ວຍໃຫ້ພວກເຂົາໄດ້ເສີມສ້າງສັກກະຍະພາບອັນສູງສຸດຂອງຕົນເອງ. ພວກເຮົາຈະປະຕິບັດງານຕາມຄວາມຮັບຜິດຊອບ ແລະ ພັນທະຂອງຕົນເອງທີ່ມີຕໍ່ນັກຮຽນຂອງພວກເຮົາ ແລະ ຕໍ່ຊຸມຊົນ LPS ໃນວົງກວ້າງ ເພື່ອສ້າງ ແລະ ຮັກສາສະພາບແວດລ້ອມທີ່ມີຄວາມປອດໄພ, ມີການໃຫ້ກຽດກັນກັນ ແລະ ສ້າງແຮງບັນດານໃຈໃຫ້ແກ່ນັກຮຽນຂອງພວກເຮົາ. ດ້ວຍເຫດນີ້, ພວກເຮົາຍັງຄົງມຸ່ງໝັ້ນທີ່ຈະພະຍາຍາມຢ່າງຕັ້ງໃຈ ແລະ ສືບຕໍ່ດຳເນີນງານໃນການເສີມສ້າງນະໂຍບາຍ ແລະ ການປະຕິບັດງານຂອງພວກເຮົາກ່ຽວກັບ

ການບໍ່ເລືອກປະຕິບັດ, ການຕໍ່ຕ້ານການລ່ວງລະເມີດ ແລະ ການຕໍ່ຕ້ານການແບ່ງແຍກທາງເຊື້ອຊາດ ເພື່ອພະຍາຍາມທີ່ຈະສ້າງສະພາບແວດລ້ອມຂອງການຮຽນຮູ້ທີ່ມີຄວາມປອດໄພ ແລະ ເປັນມິດ.

ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບລະບຽບການຊຸດໃໝ່ຂອງພວກເຮົາ, ກະລຸນາເຂົ້າໄປທີ່ເວັບໄຊ LPS ຂອງພວກເຮົາ ແລະ ຄລິກທີ່ແຖບ ***Discrimination, Harassment, and Racism** (ການເລືອກປະຕິບັດ, ການລ່ວງລະເມີດ ແລະ ການແບ່ງແຍກທາງເຊື້ອຊາດ)* ຢູ່ໃຕ້ ***Our District** (ເຂດການສຶກສາຂອງພວກເຮົາ)* ຫຼື ຕິດຕໍ່ Office of Equity and Empowerment (ສໍານັກງານຄວາມສະເໝີພາບ ແລະ ການສ້າງຄວາມເຂັ້ມແຂງ) ທີ່ເບີ (978) 674-4326. ນອກຈາກນີ້, ກະລຸນາໃຊ້ສອງສາມນາທີເຂົ້າເບິ່ງຂໍ້ຄວາມວິດີໂອສັ້ນ ທີ່ກ່າວເຖິງລະບຽບການຊຸດໃໝ່ຂອງພວກເຮົາ ແລະ ຄວາມມຸ່ງໝັ້ນຂອງພວກເຮົາໃນການເສີມສ້າງຄວາມສະເໝີພາບ.

ດ້ວຍຄວາມນັບຖື ແລະ ຮັກແພງ,

Dr. Joel D. Boyd
Superintendent of Schools (ຜູ້ບໍລິຫານໂຮງຮຽນ)